**ໂຮງຮຽນວັນອາທິດ**

**ວັນອາທິດ ທີ 17 ເດືອນກໍຣະກະດາ 2022 (07-17-2022)**

---

**ຄວາມສາມັກຄີຜ່ານພຣະວິນຍານ**

*ແມ່ນຫັຍງທີ່ເປັນກາວທີ່ເຮັດໃຫ້ຄອບຄົວຫຼືເພື່ອນມິດສະຫາຍຂອງທ່ານຕິດເຂົ້າກັນ?*

**ຈຸດສຳຄັນໃນບົດຮຽນ:** ພຣະວິນຍານບໍຣິສຸດນຳພາພວກເຮົາໃຫ້ເຂົ້າມາເປັນຄຣິສຕະຈັກດຽວ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ໃນເດືອນມິຖຸນາ 2016, ການເລືອກຕັ້ງປະທານຄົນໃໝ່ຂອງຄະນະບັບຕິດສັມພັນພາກໃຕ້ທີ່ເປັນການແຂ່ງຂັນທີ່ໃກ້ຄຽງຫຼາຍ. ການລົງຄະແນນສຽງນັ້ນຍັງບໍ່ສາມາດຕົກລົງໄດ້, ຈຶ່ງຕ້ອງເຮັດໃຫ້ມີການລົງຄະແນນສຽງຄັ້ງທີ່ສອງ. ກ່ອນການລົງຄະແນນສຽງດັ່ງກ່າວນີ້, ຜູ້ສມັກຮັບເລືອກຕັ້ງຄົນນຶ່ງ, ທ່ານ ເຈ. ດີ. ກເຣັຽ (J.D. Greear), ໄດ້ຖອນຕົວອອກຈາກຕຳແໜ່ງ. ກເຣັຽ (Greear) ໄດ້ບອກກອງປະຊຸມວ່າ ລາວໄດ້ອະທິຖານໃນຄືນກ່ອນແລະໄດ້ເຊື່ອວ່າລາວຕ້ອງແນະນຳໃຫ້ແກ່ຄູ່ແຂ່ງຂອງລາວ, ສຕີບ ເກນສ໌ (Steve Gaines), ໃຫ້ໄດ້ຮັບການເລືອກຕັ້ງທີ່ໜ້າຊົມເຊີຍ. ໜ້າສົນໃຈ, ເກນສ໌ (Gaines) ຍັງໄດ້ຕັດສິນໃຈທີ່ຈະຖອນຕົວເປັນຜູ້ສມັກເພື່ອຜົນປໂຍດຂອງຄວາມເປັນອັນນຶ່ງອັນດຽວກັນ. ຊາຍທັງສອງໄດ້ພົບປະກັນ, ອະທິຖານ, ແລະໄດ້ຕົກລົງວ່າທ່ານ ເກນສ໌ (Gaines) ຄວນເປັນຜູ້ສເນີຊື່ແຕ່ຜູ້ດຽວແລະຮັບເອົາບົດບາດເປັນປະທານ. ຄົນເຫຼົ່ານີ້ໄດ້ຕັດສິນໃຈວ່າຄວາມສາມັກຄີໃນພັນທະກິດມີຄວາມສຳຄັນທີ່ສຸດ. ການຕັດສິນໃຈຂອງພວກເພິ່ນແມ່ນການສະແດງຄວາມສາມັກຄີ.

ຊາວຄຣິສຕຽນແມ່ນກຸ່ມຄົນທີ່ມີຄວາມຫຼາກຫຼາຍ, ເຖິງແມ່ນວ່າຢູ່ໃນນິກາຍໃດນຶ່ງກໍຕາມ. ພວກເຮົາມີຄວາມແຕກຕ່າງກັນໃນວັດທະນະທັມ, ອາຍຸ, ສະຖານະການເສດຖະກິດສັງຄົມ, ສີມືແຮງງານ, ບຸກຄະລິກລັກສນະ, ແລະບາງຄັ້ງເຖິງແມ່ນວ່າຢູ່ໃນສິດທີທີ່ພວກເຮົາຖື. ສິ່ງດຽວທີ່ສາມາດນຳເອົາຄວາມສາມັກຄີລະຫ່ວາງຄົນເຫຼົ່ານັ້ນແມ່ນການເຄື່ອນໄຫວຂອງພຣະເຈົ້າ. ພຣະອົງໃຫ້ພວກເຮົາມີຄວາມເຊື່ອດຽວແລະງານຮັບໃຊ້ດຽວ.

**ພຣະຄັມພີກ່າວວ່າຢ່າງໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

**<u>ສຶກສາພຣະຄັມພີ</u>**

### 1. 1 ໂກຣິນໂທ 12:4-7

*4 ຂອງພຣະຣາຊທານນັ້ນມີຕ່າງໆ ກັນ ແຕ່ມີພຣະວິນຍານອົງດຽວກັນ. 5 ງານຮັບໃຊ້ມີຕ່າງໆ ກັນ ແຕ່ມີພຣະຜູ້ເປັນເຈົ້າອົງດຽວກັນ.*
*6 ການດຳເນີນງານມີຕ່າງໆ ກັນ ແຕ່ມີພຣະເຈົ້າອົງດຽວກັນເປັນຕົ້ນເຫດແຫ່ງການດຳເນີນງານຕ່າງໆ ນັ້ນໃນທຸກຄົນ. 7 ການສະ*
*ແດງຂອງພຣະວິນຍານນັ້ນມີແກ່ທຸກຄົນເພື່ອປໂຍດຮ່ວມກັນ.*

ເມື່ອໂປໂລໄດ້ເດີນທາງໄປເຖິງເມືອງໃໝ່. ກ່ອນອື່ນທ່ານຈະໄປທີ່ທັມມະເທສນາເພື່ອປະກາດຂ່າວດີເຣື່ອງພຣະເມຊີອານແກ່ຊາວຢິວຢູ່ທີ່ນັ້ນ. ຊາວຢິວທີ່ຍຶດຖືຮີດຄອງວັດທະນະທັມທົ່ວໄປ, ທີ່ເປັນທັສນະທົ່ວໄປຂອງໂລກ, ແລະມີຄວາມຮູ້ທົ່ວໄປກ່ຽວກັບພຣະເຈົ້າ. ດັ່ງນັ້ນໂປໂລຈຶ່ງໄດ້ບອກຂ່າວດີຂອງພຣະເມຊີອາ, ຫຼາຍຄົນໄດ້ຕອບຮັບຂ່າວສານຂອງພຣະຄຣິດໂດຍການວາງໃຈເຊື່ອໃນພຣະອົງ. ແລ້ວທ່ານໂປໂລກໍໄດ້ປະກາດຂ່າວປະເສີດໃນທີ່ຕລາດໃນເມືອງແລະໄດ້ນຳຂ່າວເຣື່ອງພຣະຄຣິດໄປຫາຄົນຕາມຕລາດ. ພວກເຂົາໄດ້ຕອບສນອງຕໍ່ຂ່າວປະເສີດ. ກຸ່ມຜູ້ເຊື່ອ-ທັງຊາວຢິວແລະຄົນຕ່າງຊາດ-ຈະຣວມກັນເຂົ້າເປັນອັນນຶ່ງອັນດຽວກັນ, ແຕ່ພວກເຂົາຢູ່ຫ່າງໄກຈາກກຸ່ມ. ຄຣິສຕະຈັກນີ້, ໂປໂລໄດ້ກ່າວເຖິງຄວາມຫຼາກຫຼາຍນີ້ຢູ່ໃນຄຣິສຕະຈັກເມືອງໂກຣິນໂທເພາະວ່າ, ໃນຄວາມຫຼາກຫຼາຍນັ້ນເປັນສິ່ງ

ທີ່ດີ, ຄຣິສຕະຈັກໄດ້ແບ່ງອອກເປັນກຸ່ມໆ. ເຂົາເຈົ້າບໍ່ພຽງແຕ່ແບ່ງຕາມວັດທະນະທັມເທົ່ານັ້ນ, ແຕ່ຍັງມີຄວາມເຂົ້າໃຈກ່ຽວກັບການປະຕິບັດສາສນາກິດແລະເຂົ້າໃຈເຖິງເຣື່ອງຂອງປະທານທາງຝ່າຍຈິດວິນຍານນຳອີກ. ດັ່ງນັ້ນ 1 ໂກຣິນໂທ ບົດ 12 ຈຶ່ງເປັນການຮຽກຮ້ອງໃຫ້ມີຄວາມສາມັກຄີໃນຄຣິສຕະຈັກ. ຄຳເວົ້າທີ່ສຳຄັນໃນປໂຍກນີ້ແມ່ນຂອງປະທານທີ່ແຕກຕ່າງກັນ; ໂປໂລໄດ້ເວົ້າເຖິງການທຳໜ້າທີ່ ໆແຕກຕ່າງກັນ. ໂປໂລໄດ້ສົນທະນາອະທິບາຍກ່ຽວກັບ "ຂອງປະທານທີ່ແຕກຕ່າງກັນ," "ການທຳໜ້າທີ່ທີ່ແຕກຕ່າງກັນ," ແລະ "ການເຄື່ອນໄຫວທີ່ແຕກຕ່າງກັນ," ແຕ່ມີພຣະວິນຍານບໍຣິສຸດອົງດຽວກັນເປັນຜູ້ນຳພາ, ແຕ່ພຣະອົງບໍ່ໄດ້ປະທານຂອງປະທານຢ່າງດຽວກັນທັງໝົດໃຫ້ແກ່ຜູ້ເຊື່ອແຕ່ລະຄົນ, ທຸກຄົນບໍ່ໄດ້ຖືກນຳໃຫ້ໄປເຮັດໜ້າທີ່ຢ່າງດຽວກັນ. ນີ້ຄືສາມຈຸດຂອງຄວາມແຕກຕ່າງ-ຂອງປະທານ-ວຽກງານຮັບໃຊ້, ແລະກິຈກັມ-ທີ່ອະທິບາຍເຖິງການທຳໜ້າທີ່ຂອງພຣະວິນຍານບໍຣິສຸດ, ແຕ່ລະຕຳແໜ່ງສະແດງຮູບພາບການທຳງານທີ່ມີທັສນະທີ່ແຕກຕ່າງກັນພຽງເລັກນ້ອຍ.

- **ຂອງປະທານ.** ການປະທານຄວາມເມດຕາ (ຂອງປະທານ) ພຣະພອນຂອງສະມາຊິກຄຣິສຕະຈັກຜ່ານທາງພຣະວິນຍານ.
- **ວຽກງານຮັບໃຊ້.** ການຮັບໃຊ້ທີ່ປະຕິບັດດ້ວຍຂອງປະທານນັ້ນແມ່ນເນັ້ນໜັກໃສ່ຈຸດປະສົງທີ່ພຣະຜູ້ເປັນເຈົ້າມີຕໍ່ຂອງປະທານເຫຼົ່ານັ້ນ.
- **ກິຈກັມ.** ອຳນາດທີ່ຢູ່ເບື້ອງຫຼັງຂອງປະທານເຫຼົ່ານັ້ນແລະວຽກງານຂອງພຣະເຈົ້າໂດຍຜ່ານທາງຂອງປະທານ. ກິຈກັມເຫຼົ່ານີ້ຊີ້ໃຫ້ເຫັນການນຳພາຂອງພຣະເຈົ້າທີ່ທຳງານຜ່ານທາງຂອງປະທານເຫຼົ່ານັ້ນ.

ຄວາມແຕກແຍກທີ່ເກີດຂຶ້ນໃນຄຣິສຕະຈັກຊາວໂກຣິນໂທ; ເພາະສະນັ້ນ, ໂປໂລໄດ້ເນັ້ນໜັກເຖິງຄວາມສາມັກຄີໃນຮ່າງກາຍ. ຄວາມພາກພູມໃຈຕໍ່ຂອງປະທານທາງວິນຍານແລະຄວາມເຫັນແກ່ຕົວກໍ່ໃຫ້ເກີດບັນຫາອັນໃຫຍ່ລະຫ່ວາງຄວາມສັມພັນຕໍ່ຊຶ່ງກັນແລະກັນ. ຂອງປະທານແຫ່ງພຣະວິນຍານບໍ່ໄດ້ສ້າງຄວາມແຕກແຍກ. ເຖິງຢ່າງໃດກໍຕາມ, ໂປໂລບໍ່ໄດ້ຮຽກຮ້ອງໃຫ້ມີຄວາມເປັນເອກະພາບ. ຄວາມເປັນເອກະພາບໝາຍຄວາມວ່າພວກເຮົາເຮັດສິ່ງດຽວກັນໃນລັກສນະດຽວກັນ. ພຣະວິນຍານບໍຣິສຸດທຳງານຜ່ານທາງຄວາມຫຼາກຫຼາຍຂອງພວກເຮົາ, ແຕ່, ໃນວິທີການຕ່າງໆຂອງການດຳເນີນຊີວິດຢູ່ໃນພຣະວິນຍານຂອງພວກເຮົາ, ພວກເຮົາໄດ້ສະແດງອອກໃຫ້ເຫັນເຖິງຈຸດປະສົງຂອງຄວາມສາມັກຄີ. "ການສະແດງອອກຂອງພຣະວິນຍານໄດ້ຖືກມອບໃຫ້ແຕ່ລະຄົນ." ຂອງປະທານມີຫຼາຍກວ່າຄຸນລັກສນະທີ່ພຣະວິນຍານໄດ້ມອບໃຫ້ພວກເຮົາ; ພຣະວິນຍານນັ້ນໄດ້ສະແດງພລັງອຳນາດຂອງພຣະເຈົ້າໂດຍຜ່ານທາງການທຳງານຢູ່ໃນທ່າມກາງພວກເຮົາໃນວິທີການທີ່ແຕກຕ່າງກັນ, ໃນຄວາມເປັນຈິງ, ຂອງປະທານບໍ່ແມ່ນກ່ຽວຂ້ອງກັບສ່ວນບຸກຄົນແລະສິ່ງທີ່ພວກເຮົາຕ້ອງການເຮັດ; ພຣະເຈົ້າໃຫ້ຂອງປະທານແກ່ພວກເຮົາ "ເພື່ອຜົນປໂຍດທົ່ວໄປ." ບາງຄົນອາດມີຂອງປະທານຫຼາຍຢ່າງກ່ວາຄົນອື່ນ, ແຕ່ພຣະວິນຍານອົງດຽວທີ່ທຳງານຜ່ານການງານຂອງທຸກຄົນ. ເຖິງຢ່າງໃດກໍຕາມ, ພຣະເຈົ້າໄດ້ປະທານຂອງປະທານໃຫ້ທ່ານແລະຂ້າພະເຈົ້າ, ພວກເຮົານຳໃຊ້ຂອງປະທານເຫຼົ່ານີ້ຢູ່ໃນງານການຮັບໃຊ້ພຣະອົງ, ໃນຄຣິສຕະຈັກ, ແລະເພື່ອຜົນປໂຍດອັນດີທັງໝົດຂອງໄພ່ພົນຂອງພຣະອົງ.

## 2. 1 ໂກຣິນໂທ 12: 8-11

*8 ພຣະເຈົ້າຊົງໂຜດປະທານໂດຍທາງພຣະວິນຍານ ໃຫ້ຜູ້ນຶ່ງມີຖ້ອຍຄຳປະກອບດ້ວຍສະຕິປັນຍາ ແລະໃຫ້ອີກຜູ້ນຶ່ງມີຖ້ອຍຄຳອັນປະກອບດ້ວຍວິຊາຄວາມຮູ້ ແຕ່ເປັນພຣະວິນຍານອົງດຽວກັນ. 9 ແລະໃຫ້ອີກຜູ້ນຶ່ງມີຄວາມເຊື່ອແຕ່ເປັນພຣະວິນຍານອົງດຽວກັນແລະໃຫ້ອີກຜູ້ນຶ່ງມີອຳນາດໃຫ້ຄົນດີພະຍາດ ແຕ່ເປັນພຣະວິນຍານອົງດຽວກັນ. 10 ແລະໃຫ້ອີກຜູ້ນຶ່ງມີອຳນາດເຮັດການອິດທິຣິດຕ່າງໆແລະໃຫ້ອີກຜູ້ນຶ່ງປະກາດພຣະທັມ, ແລະໃຫ້ອີກຜູ້ນຶ່ງຮູ້ຈັກສັງເກດວິນຍານຕ່າງໆ ແລະໃຫ້ອີກຜູ້ນຶ່ງປາກພາສາແປກໆ ແລະໃຫ້ອີກຜູ້ນຶ່ງແປພາສາແປກໆ. 11 ສິ່ງສາຣະພັດເຫຼົ່ານີ້ພຣະວິນຍານອົງດຽວກັນຊົງບັນດານ ແລະປະທານແກ່ທຸກຄົນຕາມຊອບພຣະທັຍຂອງພຣະອົງ.*

ຄວາມຈິງອັນນຶ່ງທີ່ເປັນກຸນແຈດັງກ້ອງອີກເທື່ອນຶ່ງຜ່ານຂໍ້ພຣະຄຳເຫຼົ່ານີ້: ມີພຣະວິນຍານແຕ່ອົງດຽວ! ໂປໂລໄດ້ກ່າວເຖິງຂອງປະທານຫຼາຍຢ່າງທີ່ແຕ່ລະຄົນສາມາດນຳມາໃຊ້ໃນພຣະກາຍຂອງພຣະຄຣິດ, ແຕ່ວ່າຂອງປະທານນັ້ນຈະເປັນແບບໃດກໍຕາມ, ທັງໝົດແມ່ນມາ

ຈາກພຣະວິນຍານອົງດຽວກັນ. ຄຣິສຕະຈັກມີຄວາມຫຼາກຫຼາຍໃນຂອງປະທານແລະງານຮັບໃຊ້, ແຕ່ງານຮັບໃຊ້ນັ້ນສຳເລັດຜົນຜ່ານທາງພຣະວິນຍານບໍຣິສຸດ.

ບັນຊີຂອງປະທານຂອງທ່ານໂປໂລໃນຂໍ້ຄວາມວັກນີ້ມີຄວາມແຕກຕ່າງບາງຢ່າງຈາກລາຍຊື່ຂອງປະທານອື່ນໆທີ່ມີຢູ່ໃນພຣະຄັມພີໃໝ່ (ໂຣມ 12:6-8; ເອເຟໂຊ 4::11, 1 ເປໂຕ 4: 9-11). ໂປໂລບໍ່ໄດ້ສນອງລາຍລະອຽດລາຍຊື່ທີ່ສົມບູນແບບຂອງພຣະຣາຊທານ; ທ່ານໄດ້ເນັ້ນໜັກໃສ່ພຣະວິນຍານຜູ້ໃຫ້ຂອງປະທານຫຼາຍກ່ວາຂອງປະທານສະເພາະເປັນພິເສດໃນສິ່ງທີ່ພວກເຮົາໄດ້ຮັບຈາກພຣະເຈົ້າ. ໂປໂລໄດ້ອະທິບາຍໃຫ້ເຂົ້າໃຈແລະເຫັນວິທີການທີ່ແຕກຕ່າງທີ່ພຣະວິນຍານໃຫ້ຂອງປະທານກັບຄົນຂອງພຣະອົງ. ຫຼາຍໆປີຜ່ານມານີ້, ຫຼາຍໆຄົນໄດ້ພະຍາຍາມຈັດກຸ່ມຂອງພຣະຣາຊທານໃນຮູບແບບຕ່າງໆ, ແຕ່ບາງທີ ວິທີງ່າຍທີ່ສຸດແມ່ນການຈັດເປັນປະເພດໃຫ້ເປັນສີ່ປະເພດດັ່ງນີ້.

- **ຂອງປະທານໃນການສນັບສນູນ.** ຂອງປະທານເຊັ່ນ: ການຊ່ວຍເຫຼືອແລະນຳພາວຽກງານຂອງຄຣິສຕະຈັກແລະຊ່ວຍເຮັດໃຫ້ສຳເຣັດ. (ໂຣມ 12:8; 1 ໂກຣິນໂທ 12:28).
- **ຂອງປະທານໃນການແບ່ງປັນ.** ຂອງປະທານເຊັ່ນການສະແດງຄວາມເມດຕາແລະການຕ້ອນຮັບແມ່ນວິທີທີ່ສາມາດເຫັນໄດ້ຊັດເຈນໃນການສື່ສານຄວາມຮັກຂອງພຣະເຈົ້າ (ໂຣມ 12:8; 1 ເປໂຕ 4:9).
- **ຂອງປະທານໃນການເວົ້າ.** ຂອງປະທານເຊັ່ນຄຳພະຍານແລະການສອນພຣະຄຳຂອງພຣະເຈົ້າເພື່ອຊ່ວຍໃຫ້ຄຣິສຕະຈັກເຕີບໂຕຂຶ້ນ (ໂຣມ 12:6,8; 1 ໂກຣິນໂທ 12:28-29; ເອເຟໂຊ 4:11).
- **ຂອງປະທານປະກອບສ່ວນ.** ຂອງປະທານເຊັ່ນ: ສະຕິປັນຍາ, ຄວາມຮູ້, ແລະຄວາມເຊື່ອທີ່ສນັບສນູນຂອງປະທານອື່ນໆ.

ພຣະວິນຍານເຮັດວຽກໃນທາງທີ່ຫຼາກຫຼາຍໂດຍຜ່ານທາງຄົນຂອງພຣະເຈົ້າເພື່ອປະຕິບັດພາຣະກິດຂອງພຣະເຈົ້າ. ພຣະອົງເຄື່ອນຍ້າຍໄປໃນບັນດາພວກເຮົາໃນຫຼາຍວິທີເພື່ອເຮັດໃຫ້ຄຸນຄວາມດີຂອງພຣະອົງສຳເຣັດ. ເປັນຫຍັງພຣະວິນຍານຈຶ່ງສະແດງໃຫ້ເຫັນຂອງປະທານຂອງການເປັນຜູ້ນຳໃນຊີວິດຂອງຄົນໃດຄົນນຶ່ງ ໃນຂນະທີ່ເຮັດວຽກໂດຍຜ່ານຂອງປະທານແຫ່ງການຕ້ອນຮັບແຂກໃນອີກຄົນອື່ນ? ພຣະວິນຍານແຈກຢາຍຂອງປະທານຂອງພຣະອົງ "ໃຫ້ແຕ່ລະຄົນຕາມທີ່ພຣະອົງຕ້ອງການ." ພຣະວິຍານບໍຣິສຸດຮູ້ຈັກສິ່ງໃດທີ່ດີທີ່ສຸດແລະພຣະອົງເຮັດໃນສິ່ງທີ່ພຣະອົງເຫັນວ່າເໝາະສົມ.

## 3. 1 ໂກຣິນໂທ 12:12-14.

*12 ເຖິງວ່າຮ່າງກາຍເປັນອັນດຽວ ກໍຍັງມີອະວັຍວະຫລາຍສ່ວນ ແລະອະວັຍວະເຫລົ່ານັ້ນ ແມ່ນຈະມີຫລາຍສ່ວນກໍຍັງເປັນກາຍດຽວກັນສັນໃດ ພຣະຄຣິດກໍຊົງເປັນສັນນັ້ນ. 13 ເພາະວ່າເຖິງແມ່ນພວກເຮົາຈະເປັນຊາດຢິວ, ຫຼືຄົນຕ່າງຊາດກໍດີ, ເປັນຂ້ອຍຂ້າຫຼືເປັນອິສຣະກໍດີ, ເຮົາທັງຫລາຍໄດ້ຮັບບັບຕິສະມາໂດຍພຣະວິນຍານອົງດຽວ ຈຶ່ງເຂົ້າເປັນກາຍອັນດຽວກັນ ແລະພຣະວິນຍານອົງດຽວກໍຊົງຊອ່ານຢູ່. 14 ເພາະວ່າຮ່າງກາຍນັ້ນບໍ່ໄດ້ປະກອບດ້ວຍອະວັຍວະອັນດຽວ ແຕ່ໄດ້ປະກອບດ້ວຍອະວັຍວະຫລາຍອັນ.*

ໂປໂລໄດ້ໃຊ້ການປຽບທຽບເພື່ອສະແດງໃຫ້ເຫັນຈຸດປະສົງຂອງທ່ານ, ທ່ານອະທິບາຍວ່າຄຣິສຕະຈັກເປັນຮ່າງກາຍຂອງພຣະຄຣິດ. ທ່ານໄດ້ຂຍາຍການປຽບທຽບນີ້ຜ່ານບົດຮຽນທັງໝົດ, ແລະໃນການເຮັດດັ່ງນັ້ນ, ເພາະທ່ານຕ້ອງການໃຫ້ພວກເຮົາເຫັນພາບຄວາມເຂັ້ມແຂງຂອງຄວາມສາມັກຄີຂອງຄຣິສຕະຈັກ. ໂປໂລໄດ້ຂຽນວ່າຮ່າງກາຍຂອງມະນຸດມີຮ່າງກາຍດຽວ, ແຕ່ໃນຮ່າງກາຍນັ້ນ "ມີອະວັຍວະຫຼາຍພາກສ່ວນ": ມືມື, ຕີນ, ຕາ, ແລະອະວັຍວະພາຍໃນ-ຫຼາຍພາກສ່ວນ. ທຸກພາກສ່ວນຂອງຮ່າງກາຍຂອງທ່ານມີຄວາມສຳຄັນສຳລັບທ່ານ. ຮ່າງກາຍຂອງທ່ານບໍ່ສາມາດເຮັດຫັຍງໃດ້ດ້ວຍຕາພຽງຢ່າງດຽວ, ແຕ່ການບໍ່ທຳງານຂອງພາກສ່ວນຂອງຮ່າງກາຍກໍຈະສ້າງຄວາມສູນເສັຽເກີດຂຶ້ນ, ເຖິງແມ່ນວ່າທ່ານບໍ່ສາມາດເຫັນອະວັຍວະພາຍໃນຂອງທ່ານ, ແຕ່ທ່ານກໍຍັງດຳເນີນຊີວິດຢູ່ໃນຮ່າງກາຍດຽວ. ຮ່າງກາຍຂອງທ່ານບໍ່ມີບ່ອນເກັບເຄື່ອງອາໄຫຼ່ສຳລອງ, ທຸກໆພາກສ່ວນລວມຕົວຢູ່ໃນຮ່າງກາຍດຽວ. ຄວາມສາມັກຄີຂອງພວກເຮົາບໍ່ແມ່ນຍ້ອນຄວາມຄ້າຍຄືກັນຂອງພວກເຮົາ. ໃນພຣະກາຍຂອງພຣະຄຣິດກໍເໝືອນກັນມີພາກສ່ວນຕ່າງໆທີ່ທຳໜ້າທີ່ໆແຕກຕ່າງກັນໄປ.

ຊາວເມືອງໂກຣິນໂທບາງຄົນເປັນຄົນຢິວແລະບາງຄົນເປັນຄົນກຣີກ; ບາງຄົນເປັນທາດແລະບາງຄົນເປັນອິສຣະ. ຄຣິສຕະຈັກໃນທຸກມື້ນີ້ແມ່ນແຕກຕ່າງກັນ. ຜູ້ເຊື່ອໃນທຸກວັນນີ້ມາໃນທຸກຮູບແບບແລະທຸກຊົນເຜົ່າແລະຫຼາກຫຼາຍຊະນິດຂອງໆປະທານແລະການທຳງານໃນຫຼາຍທິດທາງ, ແຕ່ພວກເຮົາທັງໝົດເປັນນຶ່ງດຽວໃນພຣະຄຣິດ. ໂປໂລໄດ້ວາດພາບເຖິງການທຳງານຂອງພຣະວິນຍານ ທີ່ຈະນຳເອົາທຸກຄົນມາສາມັກຄີກັນສອງວິທີທາງ.

- **"ພວກເຮົາທຸກຄົນໄດ້ຮັບບັບຕິສະມາໂດຍພຣະວິນຍານອົງດຽວກັນ."** ຜູ້ທີ່ເຊື່ອມີຄວາມສາມັກຄີເພາະວ່າພວກເຮົາທັງໝົດໄດ້ຖືກຈຸ່ມໃນພຣະຄຣິດແລະພຣະວິນຍານບໍຣິສຸດຂອງພຣະອົງ.
- **"ພວກເຮົາທຸກຄົນໄດ້ຮັບພຣະວິນຍານອົງດຽວກັນ.** ພວກເຮົາໄດ້ຖືກຈຸ່ມໃນພຣະວິນຍານບໍຣິສຸດ, ແລະພວກເຮົາກໍຖືກຕື່ມເຕັມໄປດ້ວຍພຣະອົງ.

ຄວາມສາມັກຄີລະຫວ່າງຄົນປະເພດຕ່າງໆເບິ່ງຄືວ່າບໍ່ເປັນຈິງ. ແຕ່ພຣະວິນຍານບໍຣິສຸດທຳງານຢູ່ພາຍໃນພວກເຮົາ, ຜູກມັດຫົວໃຈຂອງພວກເຮົາຕໍ່ກັນແລະກັນ, ໃຫ້ພວກເຮົາມີຈຸດປະສົງດຽວ, ແລະເຮັດໃຫ້ພວກເຮົາເປັນອັນນຶ່ງອັນດຽວກັນ.

## ການນຳໃຊ້ໃນຊີວິດ

ພຣະວິນຍານບໍຣິສຸດນຳພວກເຮົາເຂົ້າມາລວມຕົວກັນເປັນຄຣິສຕະຈັກດຽວ. ຈົ່ງເລືອກເອົາຂໍ້ນຶ່ງໃນການນຳໃຊ້ໃນຊີວິດຕໍ່ລົງໄປນີ້:

- **ຄົ້ນພົບ.** ຖ້າຫາກທ່ານບໍ່ຮູ້ຈັກຂອງປະທານທາງຝ່າຍວິນຍານຂອງທ່ານ, ໃຫ້ເຮັດການປະເມີນຜົນເພື່ອທີ່ຈະຊ່ວຍໃຫ້ທ່ານຄົ້ນພົບຂອງປະທານແລະວິທີການທີ່ຈະສາມາດນຳໃຊ້ຂອງປະທານນັ້ນໄດ້ໃນຄຣິສຕະຈັກຂອງທ່ານ.
- **ຮັບໃຊ້.** ໃຊ້ຂອງປະທານ(ພອນສວັນ)ທີ່ພຣະເຈົ້າໄດ້ມອບໃຫ້ກັບທ່ານເພື່ອຮັບໃຊ້ໃນພຣະກາຍຂອງພຣະອົງ, ທ່ານບໍ່ຈຳເປັນຕ້ອງຮູ້ວ່າຂອງປະທານຂອງທ່ານແມ່ນຫຍັງເພື່ອການຮັບໃຊ້; ພຽງແຕ່ເລີ້ມຕົ້ນຮັບໃຊ້ໃນບ່ອນຄວາມສົນໃຈຂອງທ່ານ, ແລະແລ້ວຂອງປະທານຈະປາກົດຕົວມັນເອງ. ຖາມຜູ້ນຳຄຣິສຕະຈັກເພື່ອນຳພາທ່ານເຂົ້າສູ່ການຮັບໃຊ້.
- **ຄຣູສອນ.** ຊຸກຍູ້ໃຫ້ຜູ້ເຊື່ອຄົນອື່ນທີ່ບໍ່ແນ່ໃຈກ່ຽວກັບການຊົງນຳຂອງພຣະວິນຍານຂອງເຂົາ. ໃຫ້ທ່ານສມັກໃຈທີ່ຈະຍ່າງຄຽງຂ້າງເຂົາໃນຂນະທີ່ເຂົາຊອກສແວງຫາພຣະປະສົງຂອງພຣະເຈົ້າຢູ່ໃນຄຣິສຕະຈັກ.

ຄົນສ່ວນຫຼາຍມັກຈະເບິ່ງເຫັນຄວາມແຕກຕ່າງຂອງຄົນອື່ນໃນທາງລົບ, ແຕ່ໂດຍພຣະເຈົ້າແລ້ວບໍ່ເປັນດັ່ງນັ້ນ. ພຣະເຈົ້ານຳເອົາຄວາມສາມັກຄີນັ້ນໂດຍຜ່ານທາງຄວາມແຕກຕ່າງແລະກໍ່ສ້າງເປັນເຄື່ອງປະດັບອັນສວຍງາມຈາກຂໍ້ກ່ຽວທີ່ແຕກຕ່າງຂອງພວກເຮົາ. ພຣະອົງປະທານຄວາມເຊື່ອດຽວແລະການຮັບໃຊ້ດຽວແກ່ພວກເຮົາ. ເພື່ອການນຳເອົາສະງ່າຣາສີມາສູ່ພຣະອົງເອງ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ VR.**